# ເງິນໃບ 100.000 ກີບ

# ຈະອອກສູ່ຂອດຈໍລະຈອນໃນວັນທີ 1 ກຸມພາ






ໃນຕອນບ່າຍຂອງວັນທີ 25 ມັງກອນ 2012 ຜ່ານມານີ້ ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທະນາຄານແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ ທ່ານ ສຸພັດ ໂຄດໂຍທາ ຫົວໜ້າກົມເງິນຕາ-ຄັງສາງ ທະນາຄານແຫ່ງ ສປປ ລາວ ໄດ້ອອກຖະແຫຼງຕໍ່ສື່ມວນຊົນວ່າ: ປະຈຸບັນ ທຫລ ກຳລັງກຽມນຳເອົາທະນະບັດໃໝ່ໃບ 100.000 ກີບ ອອກສູ່ຂອດຈໍລະຈອນ ໂດຍຈະເລີ່ມແຕ່ວັນທີ 1 ກຸມພາ 2012 ນີ້ເປັນຕົ້ນໄປ.

ການຈະນຳເອົາທະນະບັດດັ່ງກ່າວອອກມານຳໃຊ້ແມ່ນອີງໃສ່ແຈ້ງການຂອງທ່ານລັດຖະມົນຕີ ຫົວໜ້າຫ້ອງການລັດຖະບານເລກທີ 26/ຫລບ.ກລຂ ລົງວັນທີ 5 ມັງກອນ 2012 ກ່ຽວກັບການອະນຸຍາດພິມຈຳໜ່າຍເງິນປະເພດໃບ 100.000 ກີບ ອອກສູ່ຂອດຈໍລະຈອນ.

ການຈັດພິມທະນະບັດໃໝ່ໃນທີ່ນີ້ນັບເປັນໃບທີ່ສອງຂອງ ສປປ ລາວ ສຳລັບເງິນໃບ 100.000 ກີບ ໂດຍເງິນໃບທຳອິດແມ່ນໄດ້ຈັດພິມອອກມາໃນລະຫວ່າງທ້າຍປີ 2010 ແຕ່ກໍເປັນເງິນທີ່ຜະລິດຢູ່ໃນຂອບເຂດທີ່ຈຳກັດ ເນື່ອງຈາກຈັດພິມອອກເພື່ອເປັນທີ່ລະນຶກໃນງານສະເຫຼີມສະຫຼອງວັນສ້າງຕັ້ງວຽງຈັນເປັນນະຄອນຫຼວງຄົບຮອບ 450 ປີ.

ທ່ານຫົວໜ້າກົມເງິນຕາ-ຄັງສາງກ່າວວ່າ: ສະເພາະເງິນໃບ 100.000 ກີບ ທີ່ຜະລິດອອກມາໃໝ່ນີ້ແມ່ນເພື່ອຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດທີ່ນັບມື້ເຕີບໃຫຍ່ຂະຫຍາຍຕົວ, ປະຕິບັດນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ, ສ້າງເງື່ອນໄຂ ແລະ ສິ່ງເອື້ອອຳນວຍໃຫ້ແກ່ການຊຳລະສະສາງສິນຄ້າ ແລະ ບໍລິການ, ການພົກພາຕິດຕົວສຳລັບການໃຊ້ຈ່າຍປະຈຳວັນ ໂດຍທະນະບັດໃໝ່ນີ້ຈະນຳໃຊ້ຄຽງຄູ່ເງິນປະເພດອື່ນໆທີ່ມີໃນປະຈຸບັນລວມທັງທະນະບັດທີ່ລະນຶກໃບ 100.000 ກີບ ທີ່ຜະລິດອອກກ່ອນໜ້ານັ້ນ.

ທະນະບັດໃບໃໝ່ນີ້ແມ່ນມູນຄ່າສູງສຸດຂອງລາວທີ່ຈັດພິມດ້ວຍເຈ້ຍພິເສດມີຄຸນະພາບສູງມີລະບົບປ້ອງກັນການປອມແປງທີ່ມີຄຸນນະພາບສູງ, ສະທ້ອນແສງມີຄວາມໝັ້ນໜຽວທົນທານຕໍ່ສະພາບອົບເອົ້າມີຮູບຄວັດລາຍນ້ຳ (ແບບເຄິ່ງຄີງທ່ານປະທານ ໄກສອນ ພົມວິຫານ) ສາມາດສ່ອງຊອດໄດ້ທັງສອງຂ້າງ, ມີເສັ້ນໃຍສັງເຄາະທີ່ຮັບປະກັນບັນຈຸເຂົ້າໃນເຈ້ຍຕາມຈຸດຕ່າງໆ, ທີ່ສຳຄັນຈະສະທ້ອນແສງອອກເປັນສີທີ່ແຕກຕ່າງກັນພາຍໃຕ້ແສງລັງສີ, ພິມດ້ວຍ ແລະ ນ້ຳມຶກພິເສດຕ້ານຕໍ່ການອັດສຳເນົາ ແລະ ສະແກນເຊັ່ນນຳມຶກໂລຫະ, ນ້ຳມຶກແມ່ເຫຼັກທີ່ສາມາດສະທ້ອນແສງອອກເມື່ອຖືກແສງໄຟຢູວີ ມີຈຸດພິເສດຕົວໜັງສືນ້ອຍ (MicroText) ຢູ່ທົ່ວໃບເງິນ.

ທ່ານ ສຸພັດ ໂຄດໂຍທາ ໃຫ້ຮູ້ຕື່ມວ່າ: ຮູບພາບທີ່ໄດ້ຈັດພິມລົງໃບ 100.000 ກີບ ແມ່ນສ່ອງແສງເຖິງລັກສະນະຊາດປະຫວັດສາດ ແລະ ວັດທະນາທຳຂອງຊາດລາວ ດ້ານໜ້າມີຮູບທ່ານປະທານ ໄກສອນ ພົມວິຫານ, ເຄື່ອງໝາຍກາຊາດ, ຮູບພະທາດຫຼວງ ແລະ ຮູບລວດລາຍສິລະປະກຳຂອງລາວ

ເຮົາ, ສ່ວນວ່າດ້ານຫຼັງມີຮູບຫໍພິທະພັນ ໄກສອນ ພົມວິຫານ ແລະ ມີຮູບລວດລາຍສິລະປະກຳຂອງຊາດລາວເຮົາ.